ກຳລັງທັບເສຣີປະຊາທິປະໄຕລາວ

Lao Liberal Democratic Movement & Freedom Fighters

Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.

P.O Box 189486. 2121 Broadway St. Sacramento. CA 95818 U.S.A.

www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ເລກທີ ໔ລລ/ປພຖຊ/໐ກ໑໑໑໐**

# ຖແລງການ

## ແຈ້ງຂ່າວ ການຟອກເງິນ ຂອງພັກອັດ

ພວກເຮົາ ປະຊາຊົນພັກແລະກຳລັງທັບເສຣີປະຊາທິປະໄຕລາວ ກໍຄືປະຊາຊົນລາວທັງຊາດ ໄດ້ອອກຖແລງການສບັບນີ້, ເພື່ອແຈ້ງຂ່າວ ການຟອກເງິນ ຂອງຄນະພັກອັດ ແລະບັນດາ ນາຍພົນທັງຫລາຍໃຫ້ປະຊາຊົນ ລາວ ທັງໃນ ແລະນອກປະເທດ, ໄດ້ເຫັນທາດແທ້ ບໍ່ດີ ຂອງຄນະພັກອັດ ຂອງຜູ້ມີອຳນາດອິດທິພົນຮ່ວມກັນ.!!

ມີຄນະພັກອັດແລະນາຍພົນຕ່າງໆ ໄດ້ເອົາເງິນສ່ວນຕົວຂອງຕົນ ທີ່: -ໄດ້ມາຈາກການຍຶດເອົາຊັພສິນຂອງຣັຖບານເກົ່າ, -ໄດ້ມາຈາກການກວາດຕ້ອນ ເອົາເງິນກີບທີ່ມີເງິນຕຣາຕ່າງປະເທດຄ້ຳປະກັນ ເຫລືອຈາກ ໄຊ້ໜີ້ໃຫ້ວຽດນາມ, -ໄດ້ມາຈາກການສໍ້ໂກງເອົາເງິນຊ່ວຍເຫລືອຕ່າງປະເທດ ຈາກ 20- 25% ແລະ -ໄດ້ມາຈາກການສໍ້ໂກງພາສີປະຊາຊົນ ເຖິງ 70% ເອົາມາເຂົ້າຖົງສ່ວນບຸກຄົນ ດັ່ງນີ້ເປັນຕົ້ນ.

ເງິນສໍ້ໂກງເຫລົ່ານີ້, ເອົາໄປຝາກໄວ້ທະນາຄານ ຕ່າງປະເທດ ຢູ່ ອອສເຕຣເລັຽ, ສິງກະໂປ, ໄທຍ, ວຽດນາມ, ຈີນ ດັ່ງນີ້ເປັນຕົ້ນ, ໂດຍໃສ່ຊື່ເມັຽ, ລູກ ແລະຍາດພີ່ນ້ອງ ເພື່ອປົກປິດຖານະການ ລ້ຳລວຍຂອງຕົນ. -ເພື່ອຟອກເງິນ ທີ່ສໍ້ຣາດບັງຫລວງ ໃຫ້ກາຍເປັນເງິນສະອາດ ຖືກຕ້ອງຊອບທັມນັ້ນ, ຄນະພັກອັດໄດ້ສົມຮູ້ຮ່ວມຄິດ ກັບບໍຣິສັທ ເອກກະຊົນຢູ່ຕ່າງປະເທດ ທີ່ຕົນມີເງິນຝາກໄວ້ນັ້ນ ໃຫ້ມາລົງທຶນ ຮ່ວມກັນທຳທຸຣະກິດການຄ້າ ຢູ່ໃນລາວ ໃນດ້ານການຂຸດຄົ້ນບໍ່ແຮ່ໂລຫະ, ດ້ານສ້າງເຂື່ອນໄຟຟ້າ, ສຳປະທານທີ່ດິນປູກຕົ້ນໄປອຸດສາຫະກຳ, ປູກຢາງ, ປູກກາເຟ, ສ້າງກາສິໂນພູເຂົາຄວາຍ, ສວັນເວັກສ, ກາສິໂນບໍ່ເຕັນເຂວງຫລວງນ້ຳທາ ດັ່ງນີ້ເປັນຕົ້ນ. ແຕ່ເມື່ອ ອົງການຈັດຕັ້ງສາກົນໄດ້ຕຣວດສອບ ພົບເຫັນເສັ້ນທາງການເງິນສ່ວນບຸກຄົນ ຂອງຄນະພັກອັດແລ້ວ, ມັນໄດ້ເຮັດໃຫ້ຄນະພັກອັດ, ຜູ້ມີອຳນາດອິດທິພົນເປັນເດືອດເປັນຮ້ອນ, ຢ້ານກົວ, ມີຄວາມຕົກໃຈ, ຟ້າວຟັ່ງແກ້ໄຂ ຍົກຍ້າຍປ່ຽນແປງຮູບການໝູນເງິນຕ່າງໆ ແລະຢຸດຕິທຸກຢ່າງ ທີ່ບໍ່ສອດຄ່ອງກັບຫລັກການ ສາກົນ ລວມທັງຢຸດຕິ ອອກໃບອະນຸຍາດ ແລະຍົກເລີກການໃຫ້ສຳປະທານ ຫລາຍບໍຣິສັທ ຢູ່ໃນລາວນຳດ້ວຍ.

ວິທີຟອກເງິນ ໂດຍຖືເອົາບໍລິສັທຕ່າງປະເທດ ມາເປັນສາກບັງໜ້ານັ້ນ, ມັນໄດ້ສ້າງຄວາມເດືອດຮ້ອນ, ເສັຽຫາຍ ໃຫ້ແກ່ຊາດແລະປະຊາຊົນຢ່າງໃຫຍ່ຫລວງທີ່ສຸດ ດັ່ງທີ່ທ່ານ ຄຳອ້ວນ ບຸໜາ ຣັຖມົນຕຣີ ປະຈຳ ສຳນັກງານນາຍົກຣັຖມົນຕຣີ ໄດ້ຍອມຮັບວ່າ "ການໃຫ້ສຳປະທາດທີ່ດິນໃນລາວ ໄດ້ສ້າງຜົນກະທົບ ໃນທາງລົບ ຫລາຍຊົ້ນ" ມັນກວມເອົາປ່າດົງດິບ, ປ່າສງວນ, ປ່າປ້ອງກັນ ແລະກວມເອົາດິນຂອງປະຊາຊົນ ຢ່າງ ຫລວງຫລາຍ. ນອກຈາກນັ້ນ, ມັນຍັງກວມເອົາແຫລ່ງນ້ຳ ບ່ອນຢູ່ອາສັຍແລະບ່ອນຊອກຢູ່ຫາກິນ ຂອງປະຊາຊົນ.

ໃນຄວາມເປັນຈິງແລ້ວ, ມັນບໍ່ພຽງແຕ່ ການໃຫ້ສຳປະທານທີ່ດິນປູກຕົ້ນໄມ້ອຸດສາຫະກັມ ທີ່ສ້າງຄວາມ ເດືອດຮ້ອນ ໃຫ້ປະຊາຊົນເທົ່ານັ້ນ, ມັນຍັງມີພາກສ່ວນອື່ນໆອີກ, ເປັນຕົ້ນ: -ການສ້າງເຂື່ອນໄຟຟ້າ, ມີປະຊາຊົນ ຫລາຍແສນຄົນ ຖືກບັງຄັບໃຫ້ຍົກຍ້າຍອອກຈາກບໍຣິເວນສ້າງເຂື່ອນ.- ການຂຸດຄົ້ນບໍ່ແຮ່ ກໍເຊັ່ນດຽວ,ປະຊາຊົນ ໃນບໍຣິເວນອ້ອມແອ້ມ ກໍໄດ້ຮັບຜົນກະທົບຈາກການຖອກນ້ຳກົດ ໄຊອານາຍ ຊະເຈືອນ ລົງໃສ່ບວກນ້ຳວັງປາ ທີ່ທຳມາຫາກິນຂອງປະຊາຊົນ. ສ່ວນວ່າ ເຂດເສຖກິດ ພິເສດຄົບວົງຈອນ, ກາສີໂນຕ່າງໆ ທີ່ເປັນຕລາດຫາເງິນ ຂອງຄນະພັກຣັດນັ້ນ ຍິ່ງເປັນອັນຕຣາຍ, ເພາະມັນຂຶ້ນກັບພັກຣັດໂດຍຕຣົງ, ເຈົ້າໜ້າທີ່ຣະດັບແຂວງ ບໍ່ມີສິດຄວບຄຸມຕຣວດສອບໄດ້ ເຊັ່ນ: ກາສີໂນບໍ່ເຕັນ ໄດ້ປ່ອຍນ້ຳໂສໂຄກແລະຂີ້ເຫຍື້ອ ລົງໃສ່ຫ້ວຍຮ່ອງ, ໃສ່ແມ່ນ້ຳລຳເຊ ຢ່າງບໍ່ມີການບຳບັດຮັກສາ. ປະຊາຊົນຢູ່ທາງໃຕ້ແມ່ນ້ຳ ໄດ້ຮັບຄວາມເດືອດຮ້ອນ ແລະເກີດເປັນພຍາດ ຫລາຍຢ່າງ ໂດຍທີ່ພັກຣັດ ບໍ່ໄດ້ໃສ່ໃຈເລີຍ.

ເຖິງຢ່າງໃດກໍດີ, ພວກເຮົາ ປະຊາຊົນພັກແລະກຳລັງທັບເສຣີປະຊາທິປະໄຕລາວ ກໍຄື ປະຊາຊົນລາວ ທັງຊາດ ສນັບສນູນແລະຊົມເຊີຍພັກຣັດ ທີ່ໝຸນເອົາເງິນກັບຄືນມາປະເທດ.... ແຕ່ມັນກໍເປັນການທ້າທາຍ ເອົາປຽບ, ຂົ່ມຂູ່ ແລະຂູດຣີດປະຊາຊົນຜູ້ທຸກຍາກ ທີ່ໄດ້ເອົາເລືອດ ແລະຊີວິດຂອງຕົນ ອຸທິດເຊື່ອ ແລກກັບ ຜືນແຜ່ດິນລາວ ຕອນນີ້, ແມ່ນກະທັ່ງໂຄງການລຶບລ້າງຄວາມຍາກຈົນ ປີ 2020 ທີ່ພັກຣັດ ໄດ້ປະກາດ ໄປແລ້ວນັ້ນ ກໍບໍ່ສາມາດບັນລຸເປົ້າໝາຍໄດ້ ເພາະມັນເປັນພຽງກົນອຸບາຍ ຕົວະຍົວະ ຫລອກລວງ ປະຊາຊົນລາວ ແລະຊາວໂລກ ໃຫ້ຫລົງເຊື່ອເທົ່ານັ້ນເອງ.

ຖ້າພັກຣັດ ຫາກມີຄວາມຈິງໃຈ ຢາກແກ້ໄຂຄວາມຍາກຈົນ ຂອງປະຊາຊົນ, ຢາກແກ້ໄຂ ຄວາມຫລ້າຫລັງ ຂອງປະເທດຊາດຢ່າງແທ້ຈິງນັ້ນ, ພັກຣັດບໍ່ຕ້ອງລໍຖ້າຮອດປີ 2020 ດອກ! ໃຫ້ຮີບອອກມາໂອ້ລົມກັບພວກເຮົາ ປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ ກໍຄືປະຊາຊົນລາວ ທັງຊາດ ໂດຍໄວ, ທຸກຢ່າງ ຈະຖືກແກ້ໄຂໃຫ້ສຳເຣັດລົງຢ່າງຈົບງາມ

**ປະຊາຊົນມີໄຊຍ໌ ເສຣີປະຊາທິປະໄຕອົງອາດ ຊາດລາວຈົ່ງຈເຣີນ.**

**ຂໍຂອບໃຈ**

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**

**ຫ້ອງປະທານພັກ**

**ອາຈານ ສົມນຶກ ຟອງສູວັນ**

**ວັນທີ ໑໑ ສິງຫາ ໔໐໑໐.**